# ສຳຫຼວດຄວາມຕ້ອງການຮຽນພາສາຈີນ ຂອງນັກຮຽນທີ່ ສະຖາບັນຍຸຕິທຳແຫ່ງຊາດ ສາຂາພາກເໜືອ ທີ່ ແຂວງຫຼວງພະບາງ ສປປ ລາວ ເພື່ອກຽມຄວາມພ້ອມການເປີດເສັ້ນທາງລົດໄຟລາວ-ຈີນ

**ເພັດປະເສີດ ວັນນະພາ[1], ແສງອາລຸນ ພັນນະລັດ[2], ອານຸສິດ ລາສີ[3] ແລະ ຈຳປາ ລັດຕະນະສຸວັນນະຜົນ[4]**

*ສະຖາບັນຍຸຕິທຳແຫ່ງຊາດ ສາຂາ ແຂວງ ຫຼວງພະບາງ*

[1] ***ຜູ້ຕິດຕໍ່ພົວພັນ:*** *ເພັດປະເສີດ ວັນນະພາ, ສະຖາບັນຍຸຕິທຳແຫ່ງຊາດ ສາຂາແຂວງຫຼວງພະບາງ, ເບີໂທ: +856 20 2252 9699, ອີເມວ: Dopizza86@gmail.com*

[2,3] *ສະຖາບັນຍຸຕິທຳແຫ່ງຊາດ ສາຂາ ແຂວງ ຫຼວງພະບາງ*

[4] *ຄະນະເສດຖະສາດ ແລະ ການທ່ອງທ່ຽວ ມະຫາວິທະຍາໄລສຸພານຸວົງ*

***ຂໍ້ມູນບົດຄວາມ:***

*ການສົ່ງບົດຄວາມ: 09 ຕຸລາ 2021*

*ປັບປຸງສຳເລັດ: 12 ທັນວາ 2021*

*ການຕອບຮັບ: 30 ທັນວາ 2021*

**ບົດຄັດຫຍໍ້**

ການສຶກສາຄັ້ງນີ້ຈິ່ງກຳນົດ 2 ຈຸດປະສົງ ຄື: ສຶກສາສະພາບການຈັດການຮຽນ-ການສອນພາສາຈີນ ຂອງສະຖາບັນການສຶກສາ ພາຍໃນເທດສະບານນະຄອນຫຼວງພະບາງ ແລະ ຈຸດປະສົງເພື່ອສຳຫຼວດຄວາມຕ້ອງການຮຽນພາສາຈີນຂອງນັກສຶກສາທີ່ສະຖາບັນຍຸຕິທຳແຫ່ງຊາດ ສາຂາແຂວງຫຼວງພະບາງ ເພື່ອເປັນການກຽມຄວາມພ້ອມໃນການບໍລິການດ້ານກົດໝາຍ ເພື່ອຮອງຮັບການເປີດເສັ້ນທາງລົດໄຟລາວ-ຈີນ ທີ່ເປັນສິ່ງຈຳເປັນ ແລະ ຮັບປະກັນ ໃຫ້ປະຊາຊົນບັນດາເຜົ່າ ໄດ້ຮັບຜົນປະໂຫຍດສູງສຸດຈາກການພັດທະນາ. ການສຶກສາຄັ້ງນີ້ ໃຊ້ແບບສຳພາດ ແລະ ແບບສອບຖາມຈຳນວນ 200 ສະບັບ ໃນການເກັບກຳລວບລວມຂໍ້ມູນ ເພື່ອມາວິເຄາະຕາມຈຸດປະສົງ.

ຜົນການສຶກສາ ສາມາດສະຫຼຸບກ່ຽວກັບສະພາບການຈັດການຮຽນ-ການສອນພາສາຈີນ ເພື່ອກຽມຄວາມພ້ອມການເປີດເສັ້ນທາງລົດໄຟລາວ-ຈີນ ຂອງບັນດາສູນ, ໂຮງຮຽນ ແລະ ສະຖາບັນການສຶກສາທັງພາກລັດ ແລະ ເອກະຊົນພາຍໃນເທດສະບານນະຄອນຫຼວງພະບາງ ເຊິ່ງເພີ່ມຂຶ້ນໃນແຕ່ລະປີ, ມີຫຼັກສູດລະດັບປະລິນຍາຕີຈຳນວນໜຶ່ງຫຼັກສູດ ທີ່ ຄະນະພາສາສາດ ມະຫາວິທະຍາໄລສຸພານຸວົງ, ຫຼັກສູດ 1-6 ເດືອນ ແລະ ຫຼັກສູດ 9 ເດືອນ, ນອກຈາກນັ້ນຍັງມີການສອນພາສາຈີນໃນຊັ້ນປະຖົມ ແລະ ມັດທະຍົມຂອງໂຮງຮຽນພາກເອກະຊົນ ແລະ ມີຈຳນວນໜຶ່ງທີ່ຮຽນພາສາຈີນ ແລະ ຫຼັກສູດຕ່າງໆທາງອອນລາຍ ເນື່ອງຈາກໄດ້ຮັບຜົນກະທົບຈາກການລະບາດເຊື້ອຈຸລະໂລກສາຍພັນໃໝ່ (Covid-19), ສ່ວນການຈັດການຮຽນການສອນພາສາຈີນ ແມ່ນຍັງບໍ່ທັນມີປະສິດທະພາບເທົ່າທີ່ຄວນ ແລະ ຜົນສຳຫຼວດຄວາມຕ້ອງຮຽນພາສາຈີນເພື່ອເປັນການກະກຽມຄວາມພ້ອມຂອງນັກຮຽນທີ່ສະຖາບັນຍຸຕິທຳແຫ່ງຊາດສາຂາແຂວງຫຼວງພະບາງເຫັນວ່າຢູ່ໃນລະດັບສູງ, ມີຄວາມຈຳເປັນຕໍ່ການບໍລິການກົດໝາຍ ແລະ ສຳຄັນຕໍ່ການປະກອບວິຊາຊີບໃນຂົງເຂດກົດໝາຍ.

**ຄຳສັບສຳຄັນ:** *ສະພາບການຈັດການຮຽນການສອນ, ການກຽມຄວາມພ້ອມ, ຄວາມຕ້ອງການ, ພາສາຈີນ*

VANNAPHA et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. Jul – Dec 2021. Page 449 – 457

# A survey on Chinese Language training needs from law student, National Institute of Justice in Luang Prabang, Lao PDR as preparedness for Operating Lao-China express train

**Phetpaseuth VANNAPHA[1], Sengaloun PHANNALATH[2], Anousith LASY[3] and Champa LATTANASOUVANNAPHONH[4]**

*National Institute of Justice, Luang Prabang, Lao PDR*

***[1]Correspondence:***
*Phetpaseuth VANNAPHA, National Institute of Justice, Luang Prabang, Tel: +856 20 2252 9699, E-mail: Dopizza86@gmail.com*
*[2,3] National Institute of Justice, Luang Prabang, Lao PDR*
*[4]Department of Tourism, Faculty of Economics and Tourism, Souphanouvong University*

***Article Info:***
*Submitted: Oct 09, 2021*
*Revised: Dec 12, 2021*
*Accepted: Dec 30, 2021*

**Abstract**

This study focuses on two objectives: 1). study the current situation of teaching-learning Chinese language in urban Luang Prabang and 2). survey on the Chinese language training needs of law students at National Institute of Justice in Luang Prabang (NIJL) as preparedness for operating Lao-China express train. The preparedness is Secondary data and interview are used for objective (1), 200 questionnaires are used for objective (2).

The research found that as preparedness for operating the Lao-China express train, the current situation of teaching-learning of Chinese language training is increasingly offered by both public and private language centers. The Chinese courses are designed for short and long term training, especially there is only Souphanouvong University offers bachelor degree in Chinese Language and other language schools are offered 1-6 month-Course and 9 Month-Course. Since the impact of COVID-19, some private schools offer Chinese as a foreign language as well as some students taking Chinese courses online. The study also shows that the quality of Chinese training services in Luang Prabang still requires high proficiency and efficiency from teaching staff and facilities. In summary, the survey on Chinese language training needs for the readiness of operating express trains by law students at NIJL found that the main respondents are interested in learning Chinese and it is essential for the law profession.

**Keywords:** *training needs, Chinese language and preparedness*

## 1. ພາກສະເໜີ

ເສດຖະກິດ ຫຼວງພະບາງ ມີທ່າແຮງຂະຫຍາຍຕົວໄວ ໂດຍສະເພາະແມ່ນ ອຸດສາຫະກຳການທ່ອງທ່ຽວເປັນອຸດສາຫະກຳທີ່ສ້າງວຽກເຮັດງານທຳປະມານ 319 ລ້ານແຮງງານໃນທົ່ວໂລກ, ເປັນຂະແໜງການທີ່ສ້າງລາຍຮັບປະມານ 10.8% ຂອງລາຍຮັບ GDP (8.8 ຕື້ໂດລາ) ແລະ ອຸດສາຫະກຳການທ່ອງທ່ຽວສາກົນຂະຫຍາຍຕົວໃນລະດັບ 3.8% ໃນສົກປີ 2018 (WW TC, 2018) ອີງຕາມບົດລາຍງານຈາກພະແນກການພັດທະນາການທ່ອງ ທ່ຽວ (ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ, 2019) ລາຍງານວ່າ ໃນປີ 2018 ທີ່ຜ່ານມາມີນັກທ່ອງທ່ຽວຈຳນວນ 4,187,377 ກວ່າຄົນ, ສ້າງລາຍຮັບໂດຍສະເລ່ຍເປັນເງິນ 755,342,151, ໃນນັ້ນນັກທ່ອງທ່ຽວຈີນມາທ່ອງທ່ຽວຫຼາຍເປັນອັນດັບທີ 2 ທັດຈາກນັກທ່ອງທ່ຽວໄທ ຄື ນັກທ່ອງທ່ຽວຈີນທີ່ເຂົ້າມາທ່ອງທ່ຽວ ຈຳນວນ 1,022,727 ເທື່ອຄົນເປັນປະເພດນັກທ່ອງທ່ຽວທີ່ໃຊ້ຈ່າຍສະເລ່ຍປະມານ 80 ໂດລາສະຫະລັດຕໍ່ມື້ ເຊິ່ງນັກທ່ອງທ່ຽວໄທແມ່ນ 52 ໂດລາສະຫະລັດຕໍ່ມື້. ໃນປີ 2019 ໃນຫຼວງພະບາງ ມີນັກທ່ອງທ່ຽວເຂົ້າມາປະມານ 638,101 ເທື່ອຄົນ ປະກອບມີທີ່ພັກ, ຮ້ານອາຫານ ແລະ ຮ້ານບັນເທີງທັງໝົດປະມານ 678 ແຫ່ງ. ການຂະຫຍາຍຕົວຂອງການທ່ອງທ່ຽວຍ່ອມພາໃຫ້ມີການລົງທຶນດ້ານອຸດສາຫະກຳ ແລະ ການບໍລິການເພື່ອສະໜອງຄວາມຄວາມຕ້ອງການຂອງນັກເດີນທາງ ແລະ ນັກທ່ອງທ່ຽວ ເຊັ່ນ: ຄວາມຕ້ອງ

ການດ້ານຊັບພະຍາກອນມະນຸດ ໂດຍສະເພາະບຸກຄະລາກອນທີ່ຢູ່ໃນຂົງເຂດການບໍລິການດ້ານກົດໝາຍທີ່ມີຄວາມສຳຄັນຕໍ່ການຂະຫຍາຍຕົວຂອງການພັດທະນາເສດຖະກິດສັງຄົມ ແລະ ຮັບປະກັນໃຫ້ການພັດທະນາທີ່ຍຸຕິທຳ ແລະ ຍືນຍົງ.

ການພັດທະນາການທ່ອງທ່ຽວ ນຳມາເຊິ່ງຄວາມທັນສະໄໝ ແລະ ຄວາມຕ້ອງການດ້ານເຕັກໂນໂລຢີໃໝ່ ທີ່ຈຳເປັນຕໍ່ການດຳເນີນການ ເພື່ອສະໜອງຄວາມຕ້ອງການ ແລະ ການພັດທະນາພື້ນຖານໂຄງລ່າງດ້ານການທ່ອງທ່ຽວທີ່ທັນສະໄໝ ກໍເປັນການປະກອບສ່ວນເຂົ້າໃນການພັດ ທະນາສະພາບເສດຖະກິດ ແລະ ຊີວິດການເປັນຢູ່ຂອງສັງ ຄົມ (Goodwin, 2008).

ການຕັດສິນໃຈສ້າງທາງລົດໄຟຄວາມໄວສູງ ກໍ່ເພື່ອເປັນການກຽມຄວາມພ້ອມເພື່ອສົ່ງເສີມການທ່ອງ ທ່ຽວລາວ-ຈີນ, ການປຶກສາຫາລືໃນການສ້າງເສັ້ນທາງລົດໄຟລາວຈີນແມ່ນເລີ່ມແຕ່ປີ 2001, ຕໍ່ມາຄະນະນຳຂັ້ນສູງຈຶ່ງສ້າງແຜນໃນການກໍ່ສ້າງເສັ້ນທາງລົດໄຟແຕ່ປີ 2009 ແລະ ໂຄງການໄດ້ເລີ່ມກໍ່ສ້າງຕົ້ນປີ 2016 ແລະ ຄາດວ່າຈະສຳເລັດພາຍໃນ 5 ປີ (Wikipedia, 2021).

ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ (China-Laos) ທີ່ເລີ່ມຈາກ ໂມຫານ (Mohan)-ບໍເຕັ່ນ ຊາຍແດນລາວ-ຈີນ, ເປັນໄລຍະທາງ 400 ກິໂລແມັດ ຈາກຊາຍແດນເຖິງນະຄອນຫຼວງວຽງຈັນ ເປັນລົດໄຟຄວາມໄວສູງ ຄື 160 ກມ ຕໍ່ຊົ່ວໂມງ ເຊິ່ງເປັນໂຄງການລົງທຶນທີ່ໃຫຍ່ທີ່ສຸດຂອງ ສປຈີນ ໃນສປປ ລາວ (Xinhua, 2017).

ຕາມແຜນເບື້ອງຕົ້ນໂຄງການກໍ່ສ້າງທາງລົດໄຟ ຈະເປັນໂຄງການສ້າງວຽກເຮັດງານທຳໃຫ້ກັບປະຊາຊົນລາວ ຈຳນວນຫຼາຍກວ່າ 7,000 (ເຈັດພັນກວ່າຄົນ) ແຕ່ຜົນການລາຍງານຕົວຈິງມີແຮງງານລາວປະມານ 2,000 ກວ່າຄັນເທົ່ານັ້ນ, ສ່ວນໃຫຍ່ແມ່ນເປັນພະນັກງານຂັບລົດ (Chuen, 2019).

ປັດໃຈອັນດັບທີ່ໜຶ່ງທີ່ແຮງງານລາວເສຍໂອກາດຈາກໂຄງ ການພັດທະນາ ແລະ ໂຄງການລົງທຶນຂະໜາດໃຫຍ່ໃນ ສປປ ລາວ ກໍ່ເນື່ອງມາຈາກທັກສະທາງດ້ານພາສາຈີນ ແລະ ການຈັດການຮຽນ-ການສອນກໍ່ຍັງຈຳກັດ. ສະນັ້ນ, ຜູ້ສຶກສາຈຶ່ງມີຄວາມສົນໃຈສຶກສາສະພາບລວມກ່ຽວກັບການຈັດການຮຽນ-ການສອນພາສາຈີນຂອງສະຖານສຶກສາໃນເທດສະບານນະຄອນຫຼວງພະບາງ ແຂວງຫຼວງພະບາງ ແລະ ສຳຫຼວດຄວາມຕ້ອງການຮຽນພາສາຈີນ ຂອງນັກສຶກສາທີ່ສະຖາບັນຍຸຕິທຳແຫ່ງຊາດ ສາຂາແຂວງຫຼວງພະບາງ ເພື່ອເປັນການກຽມຄວາມພ້ອມຂອງນັກສຶກສາ ກ່ອນການເປີດເສັ້ນທາງລົດໄຟລາວ-ຈີນ ເພື່ອເປັນແນວທາງໜຶ່ງ ໃນການພັດທະນາຫຼັກສູດການຮຽນ-ການສອນໃນສະຖາບັນການສຶກສາຂັ້ນຕ່າງໆໃຫ້ນັກຮຽນນັກສຶກສາສາມາດຈົບວິຊາສະເພາະດ້ານວິຊາຊີບ ພ້ອມກັບທັກສະດ້ານພາສາຕ່າງປະເທດ ໂດຍສະເພາະແມ່ນພາສາຈີນ ເພື່ອທີ່ຈະສາມາດໄປປະກອບອາຊີບກັບຫົວໜ່ວຍທຸລະກິດຕ່າງໆ ຕາມແຜນຍຸດທະສາດຂອງລັດຖະບານ.

ແຂວງ ຫຼວງພະບາງ ຖືວ່າເປັນສູນລວມໃນການພັດທະນາການສຶກສາໃນພາກເໜືອ ຂອງ ສປປ ລາວ ໂດຍສະເພາະແມ່ນວຽກງານການບໍລິການວິຊາການດ້ານກົດໝາຍ ແລະ ການພັດທະນາຊັບພະຍາກອນມະນຸດໃນຂົງເຂດກົດໝາຍໃຫ້ແກ່ບັນດາແຂວງພາກເໜືອ ເຊິ່ງສະຖາບັນຍຸຕິທຳຜະລິດບັນດິດທີ່ຈົບດ້ານກົດໝາຍອອກໄປຮັບໃຊ້ສັງຄົມແຕ່ປີ 2006-2020 ມີຜູ້ສຳເລັດການສຶກສາປະມານ 7,034 (ເຈັດພັນສາມສິບສີ່ຄົນ) ໂດຍສະເລ່ຍປະມານ 150 ຄົນຕໍ່ປີ ເພື່ອຮັບປະກັນການໃຫ້ບໍລິການ ການຈັດການຮຽນ-ການສອນ ແລະ ການພັດທະນາຊັບພະຍາກອນມະນຸດໃຫ້ສາມາດຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດແຮງງານ ໂດຍສະເພາະແມ່ນການກະກຽມຄວາມພ້ອມດ້ານທັກສະການສື່ສານພາສາຈີນຂອງສຶກສາສະຖາບັນກົດໝາຍທີ່ເປັນຄວາມຮູ້ ແລະ ທັກສະຂັ້ນພື້ນຖານທີ່ຈະເປັນປັດໃຈສຳຄັນໃນການບໍລິການວິຊາສະເພາະດ້ານກົດໝາຍຕ່າງໆ.

ການສຶກສາຄັ້ງນີ້ ກຸ່ມຜູ້ສຶກສາໄດ້ທົບທວນບາງທິດສະດີທີ່ກ່ຽວຂ້ອງປະກອບມີ ທິດສະດີຄວາມຕ້ອງການ, ທິດສະດີສ່ວນປະສົມທາງການຕະຫຼາດດ້ານການສຶກສາ ແລະ ແນວຄິດການກຽມຄວາມພ້ອມທິດສະດີຄວາມຕ້ອງການ.

Abraham Maslow (1943) ໄດ້ອະທິບາຍວ່າ ເປັນຫຍັງຄົນເຮົາຈຶ່ງມີຄວາມຕ້ອງການສະເພາະໃດໜຶ່ງ ແລະ ເວລາໃດໜຶ່ງ, ທ່ານໄດ້ອີງໃສ່ທິດສະດີທີ່ວ່າ ຄວາມຕ້ອງການຂອງມະນຸດ ແມ່ນມີລະດັບຈາກລະດັບຂັ້ນຕໍ່າຫາສູງ ຫຼື ສິ່ງທີ່ຈຳເປັນກວ່າໝູ່ ໂດຍມະນຸດ ຈະພະຍາຍາມຕອບສະໜອງຄວາມຕ້ອງການທີ່ສູງກວ່າ, ທ່ານ Maslow ໄດ້ກຳນົດຄວາມຕ້ອງການຕ່າງໆ ຈາກຕໍ່າຫາສູງ ຊຶ່ງປະກອບມີ ຄວາມຕ້ອງການທາງດ້ານຮ່າງກາຍ, ຄວາມຕ້ອງການທາງດ້ານ

ຄວາມປອດໄພ, ຄວາມຕ້ອງການທາງດ້ານສັງຄົມ, ຄວາມຕ້ອງການຄວາມນັບຖື ແລະ ສະຖາ ນະພາບທາງສັງຄົມ, ຄວາມຕ້ອງການບັນລຸເປົ້າໝາຍສູງສຸດໃນຊີວິດ ແຕ່ການສຶກສາຄັ້ງນີ້ ແມ່ນຈະນຳເອົາຄວາມຕ້ອງການທາງດ້ານທັກສະການສື່ສານພາສາຕ່າງປະເທດ ໂດຍສະເພາະ ແມ່ນຄວາມຕ້ອງການຮຽນພາສາຈີນ ທີ່ເປັນທັກສະທີ່ຈຳເປັນຕໍ່ການປະກອບອາຊີບທີ່ໝັ້ນຄົງ.

ທິດສະດີສ່ວນປະສົມການຕະຫຼາດດ້ານການສຶກສາທິດສະດີສ່ວນປະສົມດ້ານການຕະຫຼາດການສຶກສາທີ່ພັດທະນາ ໂດຍ Kotler ແລະ Fox (1995) ດັ່ງລາຍລະອຽດລຸ່ມນີ້:

1) ຫຼັກສູດ (Program) ເປັນພື້ນຖານທີ່ສຳຄັນສຳຫຼັບສ່ວນປະສົມດ້ານການຕະຫຼາດການສຶກສາ. ຫຼັກສູດເປັນສິ່ງທີ່ສະຖາບັນການສຶກສາຈະຕ້ອງໄດ້ຕັດສິນໃຈກ່ອນອື່ນໝົດ. ການພັດທະນາຫຼັກສູດທີ່ສາມາດສະໜອງຄວາມຕ້ອງການທີ່ຈຳເປັນ ຖືວ່າເປັນການຕະຫຼາດໜຶ່ງຂອງສະຖາບັນການສຶກສາ, ສຳຫຼັບການສຶກສາຊັ້ນສູງ ຄຸນນະພາບຂອງຫຼັກສູດ ແມ່ນຂຶ້ນກັບການສອນ ແລະ ການບໍລິການຊຸມຊົນ.

2) ລາຄາ (Pricing) ໝາຍເຖິງ ຈຳນວນເງິນທີ່ແລກປ່ຽນກັນລະຫວ່າງຜູ້ຊື້ ແລະ ຜູ້ຂາຍບໍລິການ, ໃນພາກທຸລະກິດການສຶກສາ, ລາຄາ (Price) ໝາຍເຖິງຄ່າລົງທະບຽນຮຽນ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບການຮຽນການສອນ. ລາຄາ ເປັນປັດໃຈທີ່ສົ່ງຜົນຕໍ່ຍຸດທະສາດທາງການຕະຫຼາດຫຼາຍທີ່ສຸດ ເນື່ອງຈາກວ່າ ຜູ້ຮຽນ ແລະ ຜູ້ປົກຄອງກັງວົນລາຍຈ່າຍຕໍ່ການເຂົ້າຮຽນ ເຊິ່ງ Kotler ແລະ Fox (1995) ໃຫ້ຄວາມໝາຍຄ່າໃຊ້ຈ່າຍຂອງນັກ ຮຽນປະກອບມີ ຄ່າໃຊ້ຈ່າຍທີ່ເປັນເງິນ ແລະ ບໍ່ເປັນເງິນ ເຊັ່ນ ຄວາມດຸໝັ່ນ (effort cost), ຄຸນຄ່າທາງຈິດໃຈ (psychological cost) ແລະ ຄຸນຄ່າດ້ານເວລາ (time cost).

3) ສະຖານທີ່ ແລະ ຊ່ອງທາງການຈັດຈຳໜ່າຍ (Place) ເປັນອົງປະກອບທີ່ສາມຂອງສ່ວນປະສົມທາງການຕະ ຫຼາດ ດ້ານທຸລະກິດການສຶກສາ, ຊ່ອງທາງການຈັດຈຳໜ່າຍ (distribution) ໃນທຸລະກິດການສຶກສາໝາຍເຖິງຄວາມສະດວກສະບາຍໃນການເຂົ້າເຖິງ, ຄວາມຫຼາກຫຼາຍຂອງຫຼັກສູດ ທີ່ສາມາດບໍລິການໃຫ້ຜູ້ຮຽນໄດ້ຢ່າງທົ່ວ ແລະ ນອກຈາກນີ້ ຍັງໝາຍເຖິງຊ່ອງທາງການບໍລິການການຮຽນ-ການສອນ ທີ່ທັນກັບຍຸກເຕັກໂນໂລຊີທີ່ສາມາດຈັດການຮຽນການສອນທາງໄກເພື່ອບໍລິການການສຶກສາໃຫ້ກັບຜູ້ຮຽນໂດຍບໍ່ໄດ້ຈຳກັດສະເພາະສະຖານທີ່ນຳອີກດ້ວຍ.

4) ການສົ່ງເສີມການຕະຫຼາດ (Promotion) ເປັນອົງປະກອບໜຶ່ງຂອງສ່ວນປະສົມທາງການຕະຫຼາດທີ່ເຮັດໃຫ້ຜູ້ຮຽນເລືອກທີ່ຈະເຂົ້າຮຽນ ທີ່ປະກອບມີ ການຕະຫຼາດທາງກົງ (direct marketing), ການສົ່ງເສີມການຂາຍ (sales promotion), ການໂຄສະນາ (advertising), ສື່ອິນເຕີເນັດ (internet) ແລະ ການໃຫ້ທຶນການສຶກສາ. ຍຸດທະສາດການຕະຫຼາດທີ່ດີທີ່ສຸດສຳລັບການສຶກສາຊັ້ນສູງແມ່ນການທີ່ເຂົ້າມາເຖິງຄວາມຕ້ອງການຂອງຜູ້ຮຽນ.

5) ຄົນ (People) ໝາຍເຖິງອົງປະກອບດ້ານພະນັກງານ ແລະ ບຸກຄະລາກອນຄູ ທີ່ມີຄວາມສຳຄັນໃນການບໍລິການສິ່ງຄວາມຮູ້, ການຄຸ້ມຄອງພະນັກງານ ແລະ ການສ້າງ ສາຍພົວພັນກັບລູກຄ້າ. ບຸກຄະລາກອນຈຶ່ງເປັນປັດໃຈຫຼັກເພື່ອຄວາມສຳເລັດໃນການຈັດການຮຽນການສອນ. ຄົນໃນທີ່ນີ້ຍັງໝາຍເຖິງນັກຮຽນທີ່ພວມສຶກສາຢູ່ໃນສະຖາບັນ ແລະ ຜູ້ທີ່ຈົບການສຶກສາ ເພາະຄົນມັກຈະສອບຖາມຂໍ້ມູນຈາກຜູ້ຮຽນກ່ຽວກັບຄຸນນະພາບ, ທັກສະ ແລະ ບຸກຄະລິກຄະພາບຂອງພະນັກງານ, ທັດສະນະຄະຕິ, ພຶດຕິກຳ ທີ່ມີຜົນຕໍ່ຄວາມຮັບຮູ້ຂອງຜູ້ຮຽນ ແລະ ການປະຕິສຳພັນກັບພະນັກງານ ແລະ ຄູຂອງສະຖາບັນນັ້ນໆ.

6) ຂະບວນການ (Process) ໝາຍເຖິງລະບົບການບໍລິຫານ ແລະ ຂະບວນການການຈັດການຮຽນການສອນເຊັ່ນຂະວນການບໍລິຫານ, ການລົງທະບຽນ, ການສອນ, ການຮຽນ, ກິດຈະກຳທາງສັງຄົມ ແລະ ກິດຈະກຳງານແຂ່ງຂັນກິລາເປັນຕົ້ນ.

7) ກາຍະພາບ ແລະ ບັນດາສິ່ງອຳນວຍຄວາມສະດວກ (Physical Facilities and Evidence) ໝາຍເຖິງສະພາບທາງກາຍະພາບທີ່ອຳນວຍຄວາມສະດວກຕັ້ງແຕ່ແຜ່ນພັບການບໍລິການຂໍ້ມູນ ແລະ ໂຄງລ່າງພື້ນຖານ ເຊັ່ນສະພາບແວດລ້ອມ, ອາຄານ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ແນວຄວາມຄິດການກຽມຄວາມພ້ອມຜົນການສຶກສາພົບວ່າ ຄົນທີ່ປະສົບຜົນສຳເລັດດ້ານທຸລະກິດຈະຕ້ອງກະກຽມຄວາມພ້ອມດ້ານຄວາມຮູ້, ຄວາມສາມາດດ້ານວິຊາສະເພາະ, ທັກສະດ້ານພາສາ ແລະ ທັດສະນະຄະຕິທີ່ເປັນເອກະລັກສະເພາະຕົນ (ແສງຈັນ ຈັນທະເສນ ແລະ ຄະນະ, 2020).

Riemer (2007) ກ່າວວ່າການເຮັດວຽກເປັນທີມ

ແລະ ການສື່ສານກັບສະມາຊິກໃນທີມ ແມ່ນທັກສະຫຼັກ ສໍາລັບນັກຮຽນທີ່ຈະຕ້ອງມີ ແລະ ຕ້ອງພັດທະນາຕົນເອງ. ປັດຈຸບັນ, ນາຍຈ້າງຫຼາຍຄົນຕ້ອງການພະນັກງານທີ່ມີຄວາມສາມາດ ແລະ ທັກສະໃໝ່ໆຫຼາຍດ້ານ ເຊັ່ນທັກສະການສື່ສານ ໂດຍສະເພາະແມ່ນທັກສະການສື່ສານພາສາຕ່າງປະເທດແມ່ນມີຄວາມສໍາຄັນຫຼາຍໃນສະຕະວັດໃໝ່, ທັກສະດ້ານພາສາໄດ້ແກ່ການປາກເວົ້າ, ການຟັງ, ການຂຽນ, ການສື່ສານ, ທັກສະການສື່ສານກັບຄົນຕ່າງວັດທະນາທໍາ, ຜູ້ຮຽນສາມາດຝຶກຝົນຫຼໍ່ຫຼອມຕົນເອງໂດຍການນໍາສະເໜີບົດໃນຊັ້ນຮຽນ, ການສົນທະນາແລກປ່ຽນ ແລະ ການສ້າງສື່ຕ່າງໆທີ່ຊ່ວຍໃນການພັດທະ ນາທັກສະການສື່ສານ. ເຖິງຢ່າງໃດກໍ່ຕາມ, ທັກສະໃນການຟັງຍັງປະກອບດ້ວຍທັກສະການສື່ສານອື່ນໆເຊັ່ນ: ການຟັງຍັງຕ້ອງປະກອບມີການຂຽນ 10%, ດ້ານການອ່ານ 15%, ດ້ານການເວົ້າ 15% ແລະ ດ້ານການອ່ານ 45%.

ຈຸດປະສົງຂອງການສຶກສາຄັ້ງນີ້ ແມ່ນເພື່ອສຶກສາສະພາບການຈັດການຮຽນການສອນ ພາສາຈີນ ຂອງສະຖາບັນການສຶກສາ ເທດສະບານນະຄອນຫຼວງພະບາງ ແຂວງຫຼວງພະບາງ ແລະ ສຶກສາຄວາມຕ້ອງການຮຽນພາສາຈີນຂອງນັກສຶກສາສະຖາບັນຍຸຕິທໍາແຫ່ງຊາດ ສາຂາແຂວງຫຼວງພະບາງ ເທດສະບານນະຄອນຫຼວງພະບາງ.

## 2. ວິທີການຄົ້ນຄວ້າ

ການສຶກສາຄັ້ງນີ້ໃຊ້ການສຶກສາແບບປະສົມປະສານ (MIXED METHOD) ໂດຍການນໍາໃຊ້ທິດສະດີ 7ps ໃນການສໍາພາດຜູ້ບໍລິຫານ ແລະ ຕ່າງໜ້າອາຈານສອນພາສາຈີນໃນການເກັບກໍາຂໍ້ມູນກ່ຽວກັບການຈັດການຮຽນການສອນພາສາຈີນ ຕາມຈຸດປະສົງທີ (1) ແລະ ໃຊ້ແບບສອບຖາມໃນການສຶກສາຄວາມຕ້ອງການຮຽນພາສາຈີນຂອງນັກສຶກສາທີ່ຮຽນຢູ່ ສະຖາບັນຍຸຕິທໍາແຫ່ງຊາດ ສາຂາແຂວງຫຼວງພະບາງ.

### 2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ເຂົ້າໃນການສຶກສານີ້ ແມ່ນກໍານົດເອົານັກສຶກສາຈໍານວນທັງໝົດທີ່ສຶກສາ ທີ່ສະຖາບັນຍຸຕິທໍາແຫ່ງຊາດ ສາຂາແຂວງ ຫຼວງພະບາງໃນສົກສຶກສາ 2020 - 2021 ຈໍານວນ 242 ຄົນ.

### 2.2 ຂອບເຂດການສຶກສາ

ການສຶກສາໃນຄັ້ງນີ້ ແມ່ນ ສຶກສາສະພາບລວມການຈັດການຮຽນການສອນ ພາສາຈີນ ຂອງບັນດາສະ ຖານສຶກສາ ທັງພາກລັດ ແລະ ເອກະຊົນ ໃນເທດສະບານນະຄອນຫຼວງພະບາງ ແລະ ເລືອກສໍາຫລວດຄວາມຕ້ອງການຮຽນພາສາຈີນ ຂອງນັກສຶກສາທີ່ສະຖາບັນຍຸຕິທໍາແຫ່ງຊາດ ສາຂາແຂວງຫຼວງພະບາງ.

### 2.3 ວິທີການດໍາເນີນການສຶກສາ

ການດໍາເນີນການສຶກສາໃນຄັ້ງນີ້ ແມ່ນໃຊ້ວິທີການສຶກສາແບບປະສົມປະສານ ເຊີງປະລິມານ ແລະ ເຊີງຄຸນນະພາບ ໂດຍນໍາໃຊ້ແບບສອບຖາມລົງເກັບກໍາຂໍ້ມູນຕົວຈິງ ການຢາຍແບບສອບຖາມ, ການລົງສໍາພາດຜູ້ບໍລິຫານການສຶກສາ ແລະ ຄູສອນທີ່ດໍາເນີນການຮຽນການສອນພາສາຈີນ ຊຶ່ງໃຊ້ແບບສໍາພາດທີ່ມີໂຄງສ້າງ, ປຶ້ມບົກ, ເຄື່ອງບັນທຶກສຽງ ເພື່ອຄວາມລະອຽດໃນການເກັບຂໍ້ມູນ ແລະ ຍັງໄດ້ນໍາໃຊ້, ຂໍ້ມູນທີ່ໄດ້ຈາກການເກັບລວບ ລວມຂໍ້ມູນຈາກບັນດາປຶ້ມຕໍາລາແບບຮຽນ, ນິຕິກໍາ, ການທົບທວນຄວາມຄິດ ແລະ ທິດສະດີທີ່ກ່ຽວຂ້ອງມາເປັນບ່ອນອີງໃນການສ້າງແບບສໍາພາດໃຫ້ກົງກັບຈຸດປະສົງ.

### 2.4 ການວິເຄາະຂໍ້ມູນ

ໃນການວິເຄາະຂໍ້ມູນດ້ານປະລິມານ ຫຼັງຈາກເກັບລວບລວມຂໍ້ມູນໃນແບບສອບຖາມແລ້ວນວິເຄາະຜ່ານໂປຣແກມ ຄອມພິວເຕີ (Excel) ແລະ ຈັດລຽງຂໍ້ມູນທີ່ໄດ້ມາຕາມລໍາດັບ. ສະຖິຕິທີ່ໃຊ້ໃນການພັນລະນາຂໍ້ມູນແມ່ນຈໍານວນ ແລະ ຄ່າເປີເຊັນ.

ສ່ວນຂໍ້ມູນທາງຄຸນນະພາບ ໂດຍການສໍາພາດ ຂໍ້ມູນທີ່ໄດ້ແມ່ນນໍາໃຊ້ວິທີລວບລວມຈົນຂໍ້ມູນມີຄວາມອີ່ມຕົວ (Saturated Data) ຈື່ງຍຸດຕິການສໍາພາດ ແລະ ນໍາໃຊ້ຮູບແບບການພັນລະນາວິເຄາະ (Descriptive Analysis) ໃນການອະທິບາຍຜົນທີ່ໄດ້ຕາມສະພາບຕົວຈິງທີ່ກົງກັບຈຸດປະສົງ.

## 3. ຜົນໄດ້ຮັບ

### 3.1 ສຶກສາສະພາບການຈັດການຮຽນ-ການສອນພາສາຈີນ ຂອງສະຖາບັນການສຶກສາ ພາຍໃນເທດສະບານນະຄອນ ຫຼວງພະບາງ

ຈາກການສໍາພາດ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ (ອານຸແພງ ແກ້ວວົງສາ, 2020), ຜູ້ອໍານວຍການໂຮງຮຽນພັດທະນາ (ບຸນຕາ, 2020), ຕ່າງໜ້າສະຖາບັນຂົງຈື (Li BUJUN, 2020), ແລະ ອາຈານປະຈໍາສາຂາພາສາຈີນ, ມະຫາວິທະຍາໄລສຸພານຸວົງ (ບົວຈີນ ຈິດປານີ, 2020) ຜົນການສຶກສາຕາມຈຸດປະສົງທີ (1)

ສະພາບການຈັດການຮຽນການສອນພາສາຈີນ ຕາມທິດສະດີສ່ວນປະສົມທາງການຕະຫຼາດ ສາມາດສັງລວມໄດ້ ດັ່ງນີ້:

1) ຫຼັກສູດ (Program) ພາສາຈີນທີ່ເປີດສອນຕາມສະຖາບັນການສຶກສາຊຶ່ງສະຖານທີ່ຈັດການຮຽນ-ການສອນພາສາຈີນປະກອບມີ: ມະຫາວິທະຍາໄລສຸພານຸວົງ, ສະຖາບັນຂົງຈື້, ສູນ E&E, ໂຮງຮຽນຊິນຮົວ, ໂຮງຮຽນພັດທະນາ,ໂຮງຮຽນຮຸ່ງຈະເລີນ ແລະ ໂຮງຮຽນຮຸ່ງຟ້າ. ນອກ ຈາກນັ້ນ ຍັງມີບັນດາສູນເອກະຊົນຈຳນວນໜຶ່ງພວມທົດລອງເປີດຫຼັກສູດພາສາຈີນໄລຍະສັ້ນ. ລະດັບປະລິນຍາຕີມີແຕ່ມະຫາວິທະຍາໄລສຸພານຸວົງ (ຫຼັກສູດ 4 ປີ), ສະຖາບັນຂົງຈື ສອນຫຼັກສູດໄລຍະສັ້ນ 1 ປີ, ແລະ ຫຼັກສູດ 3 - 9 ເດືອນ, ນອກຈາກນັ້ນ ຍັງມີສະຖາບັນການສຶກສາ ກຳນົດເປັນວິຊາເສີມໃນໂຮງຮຽນສາມັນຂັ້ນປະຖົມປ.1 - ປ.5 ແລະ ມ.1 - ມ.4 ຈຳນວນ 3 ແຫ່ງ ແລະ ເລີ່ມອານຸບານ 3 ຈຳນວນ 1 ແຫ່ງ, ແລະ ສູນເອກະຊົນ 1 ແຫ່ງ (ໄລຍະເວລາສອນຈຳນວນ 1.5-5 ຊົ່ວໂມງຕໍ່ອາທິດ). ນອກຈາກນັ້ນ ຍັງມີທຶນການສຶກສາຂອງສປ ຈີນ ໃຫ້ແກ່ນັກຮຽນລາວປະມານ 115 ທຶນຕໍ່ປີ (ອາຊີວະ, ຊັ້ນສູງ ແລະ ປ.ຕີ) ສາຂາບູລິມາສິດ ແມ່ນ ເທັກນິກການກໍ່ສ້າງ, IT, ກະສິກຳ ແລະ ຄູພສາຈີນ.

2) ລາຄາ (Pricing) ໝາຍເຖິງຄ່າລົງທະບຽນຮຽນ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບການຮຽນການສອນ. ຫຼັກສູດປ.ຕີ (1,600,000 ກີບ) ຕໍ່ປີ ມະຫາວິທະຍາໄລສຸພານຸວົງ, ຫຼັກສູດໄລຍະສັ້ນໂດຍສະເລ່ຍ 216,000 ກີບຕໍ່ເດືອນ, (ຫຼັກສູດໄລຍະສັ້ນ 3-9 ເດືອນ) ຫຼັກສູດ ທີ່ເສີມພາສາຈີນຂອງໂຮງຮຽນສາມັນ ທີ່ບໍ່ໄດ້ແຍກສະເພາະ ເຊັ່ນໂຮງຮຽນປະຖົມທີ່ບັນຈຸພາສາຈີນເປັນວິຊາເສີມປະກອບມີ 3 ໂຮງຮຽນ ຄື: (1) ໂຮງຮຽນຊິນຮົວ ທີ່ສອນພາສາຈີນລະດັບພື້ນຖານໃນຫຼັກສູດປະຖົມ ຫາ ມັດທະຍົມຕົ້ນ ຄ່າລົງທະບຽນຮຽນເລີ່ມຕົ້ນທີ່ 270,000-300,000 ກີບ/ເດືອນ; (2) ໂຮງຮຽນອານຸບານ-ປະຖົມພັດທະນາ ເປັນໂຮງຮຽນທີ່ເສີມພາສາຈີນໃນຫຼັກສູດ ລະດັບປະຖົມ ປ.3 - ປ.5 1.5 ຊົ່ວໂມງຕໍ່ອາທິດ ຄ່າລົງທະບຽນຮຽນລວມ 1,200,000 ກີບ/ເດືອນ, ສ່ວນລະດັບມັດທະຍົມ 4 ຊົ່ວໂມງຕໍ່ອາທິດ ຄ່າລົງທະບຽນຮຽນ 900,000 ກີບ/ເດືອນ; (3) ໂຮງຮຽນຮຸ່ງຈະເລີນ ເລີ່ມເສີມພາສາຈີນເຂົ້າໃນຫຼັກສູດ ປ.1 - ມ.2 ຮຽນອາທິດລະ 1.5 ຊົ່ວໂມງຕໍ່ອາທິດ ຄ່າທຳນຽມ 300,000 ກີບ/ເດືອນ ສັງເກດເຫັນວ່າ ໂຮງຮຽນທີ່ເສີມພາສາຈີນໃນຫຼັກສູດເຫັນວ່າຄ່າທຳນຽມຈະສູງກວ່າໂຮງຮຽນທີ່ບໍ່ໄດ້ບັນຈຸພາສາຈີນໃນຫຼັກສູດ.

3) ສະຖານທີ່ ແລະ ຊ່ອງທາງການຈັດຈຳໜ່າຍ (Place) ເປັນອົງປະກອບທີ່ສາມ ຂອງສ່ວນປະສົມທາງການຕະ ຫຼາດ ດ້ານທຸລະກິດການສຶກສາ, ຊ່ອງທາງການຈັດຈຳໜ່າຍ (distribution) ໃນທຸລະກິດການສຶກສາ ເປັນສະຖານທີ່ເປັນປັດໄຈສຳຄັນທີ່ສຸດ ເຫັນວ່າສະພາບລວມທາງກາຍຍະພາບສ່ວນຫຼາຍສະຖານສຶກສາທີ່ຈັດການຮຽນການສອນພາສາຈີນແມ່ນມີທີ່ຕັ້ງທີ່ສະດວກໃນການເຂົ້າເຖິງ , ສະຖານທີ່ຈອດລົດສະດວກສະບາຍ, ສະໜາມກິລາ ແລະ ສະຖານທີ່ຈັດກິດຈະກຳນອກຫຼັກສູດສະດວກສະບາຍ, ມີສິ່ງອຳນວຍຄວາມສະດວກທີ່ດີ ເຊັ່ນ: ໂຕະ, ຕັ່ງ, ອຸປະກອນຄອມພິວເຕີ, ແຕ່ຍັງຂາດສື່ການຮຽນການສອນ ແລະ ອຸປະກອນທີ່ຈຳເປັນ ເຊັ່ນ ເຄື່ອງສຽງ, ຫ້ອງປະຕິ ບັດການພາສາ (ຫ້ອງແລັບ), ປື້ມຕຳລາ ແລະ ສື່ວິດີໂອຍັງບໍ່ທັນພ້ອມ ທີ່ຈຳເປັນ ແລະ ພໍພັນເຖິງປະສິດທິພາບການຈັດການຮຽນ-ການສອນພາສາຈີນໃນສະຖາບັນການສຶກສາຕ່າງໆໃນເທດສະບານ ນະຄອນຫຼວງພະບາງ

4) ການສົ່ງເສີມການຕະຫຼາດ (Promotion) ຜົນການສຳພາດເຫັນວ່າ ການປະຊາສຳພັນທາງອອນລາຍ ເຊັ່ນທາງເຟດສະບຸກ ແລະ ທາງແອບ, ການຈັດກິດຈະກຳການແຂ່ງຂັນກິລາ-ສິລະປະ, ການແຂ່ງຂັນຮ້ອງເພງຈີນ, ນອກນັ້ນ, ການມອບທຶນການສຶກສາ, ມອບອຸປະກອນການສຶກສາ ຫຼື ຍົກເວັ້ນຄ່າຮຽນເປັນຮູບແບບການຕະຫຼາດທີ່ແຕ່ລະສະຖາບັນການສຶກສານິຍົມກັນ. ການຮ່ວມມືກັບ ສປຈີນ ແລະ ສະຖານກົງສູນຈີນທີ່ ຫຼວງພະບາງໃນການຊ່ວຍໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອດ້ານປື້ມຕຳລາ ແລະ ອຸປະກອນການຮຽນການສອນ ເປັນແນວທາງທີ່ສຳຄັນໃນການພັດທະນາທັກສະການສອນ ແລະ ເອກະສານປະກອບການສອນທີ່ເປັນສິ່ງໜຶ່ງທີ່ສຳຄັນຕໍ່ການຕະຫຼາດການສຶກສາ. ການຈັດກິດຈະກຳນອກຫຼັກສູດເພື່ອແຂ່ງຂັນຄວາມສາມາດດ້ານພາສາຈີນ ເພື່ອເປັນການສ້າງບົດບາດ ຂອງຕົນຕໍ່ສັງຄົມ ຍັງບໍ່ທັນຫຼາກຫຼາຍ ເນື່ອງຈາກໄດ້ຮັບຜົນກະທົບຈາກໂຄວິດ-19.

5) ຄົນ (People) ໝາຍເຖິງອົງປະກອບດ້ານພະນັກງານ ແລະ ບຸກຄະລາກອນຄູ ທີ່ມີຄວາມສຳຄັນໃນການບໍລິການສົ່ງຄວາມຮູ້, ການຄຸ້ມຄອງພະນັກງານ ແລະ ການສ້າງ ສາຍພົວພັນກັບຜູ້ຮຽນ ແລະ ຜູ້ປົກຄອງ ທີ່ເປັນ

(ລູກຄ້າ). ຈາກການສຳພາດເຫັນວ່າ ບຸກຄະລາກອນຄູທີ່ສອນພາສາຈີນ ຢູ່ໃນສະຖາບັນການສຶກສາພາກລັດເປັນຄູທີ່ຜ່ານວິຊາຄູ ແລະ ມີຄູອາສາສະມັກຄົນຈີນສອນປະຈຳທີ່ຈາກສະຖາບັນຂົງຈືເປັນຕົ້ນ, ແຕ່ບັນດາຄູພາສາຈີນທີ່ສອນຕາມສະຖານສຶກສາເອກະຊົນ ແມ່ນເຄີຍຜ່ານວິຊາຄູ ແລະ ບໍ່ໄດ້ຈົບດ້ານການສອນພາສາຈີນສະເພາະ ເຊິ່ງຈົບຈາກສາຂາວິຊາອື່ນມາສອນ. ສະນັ້ນ, ການຈັດການ-ຮຽນການສອນຍັງບໍ່ທັນມີປະສິດທິພາບ ແລະ ສະຖານສຶກສາທີ່ສອນພາສາຈີນຈຶ່ງມີຄວາມຕ້ອງການດ້ານການຝຶກອົບຮົມ ການສອນພາສາຈີນສະເພາະ, ບັນດາໂຮງຮຽນ ແລະ ສູນທີ່ຈັດການຮຽນການສອນພາສາຈີນ ກໍ່ມີຄວາມຕ້ອງການຄູພາສາຈີນຢ່າງໜ້ອຍ 2 ຕຳແໜ່ງຕໍ່ໂຮງຮຽນ.

6) ຂະບວນການ (Process) ຜົນການສຳພາດເຫັນວ່າ ການນຳພາ ຜູ້ບໍລິຫານການສຶກສາທີ່ຈັດການຮຽນ-ການສອນພາສາຈີນ ມີຄວາມຮູ້ດ້ານການບໍລິຫານການສຶກສາເປັນຢ່າງດີ, ແຕ່ຜູ້ບໍລິຫານສ່ວນຫຼາຍບໍ່ມີຄວາມຮູ້ ແລະ ຄວາມເຂົ້າໃຈ ດ້ານພາສາຈີນ, ຄູສອນພາສາຈີນ ຍັງຂາດປະສົບການ ແລະ ການເງິນຍັງເປັນປັດໃຈໃນການບໍລິ ຫານອົງກອນ. ວິທີການສິດຄວາມຮູ້ຍັງບໍ່ທັນໄດ້ດີ ເນື່ອງຈາກວ່າຄູຍັງຂາດປະສົບການ ແລະ ສື່ການສອນຍັງຈຳກັດ ລວມເຖິງປື້ມຕຳລາພາສາຈີນສຳລັບຄົນລາວສະເພາະຍັງບໍ່ທັນສອດຄ່ອງ ໂດຍສະເພາະສະຖານສຶກສາພາກເອກະຊົນ. ນອກຈາກນັ້ນ ການຈັດການຮຽນ-ການສອນ ພາສາຈີນຕາມສະຖານສຶກສາພາກເອກະຊົນ ຍັງພົບຄວາມຍຸ້ງຍາກ ເນື່ອງຈາກວ່າພາສາຈີນຍັງບໍ່ທັນມີນິຕິກຳຊັດເຈນໃນການທີ່ຈະອານຸຍາດສອນໃນໂຮງຮຽນປະຖົມ, ໂດຍສະ ເລ່ຍໃນໂຮງຮຽນສາມັນຈັດການຮຽນ-ການສອນພາສາຈີນ ປະມານ 2 ຊົ່ວໂມງຕໍ່ອາທິດ ແລະ ມັດທະຍົມ ປະມານ 5 ຊົ່ວໂມງຕໍ່ອາທິດ. ສ່ວນລະດັບມະຫາວິທະຍາໄລກໍຍັງຮຽນວິຊາພື້ນຖານຫຼາຍກວ່າພາສາຈີນ ແລະ ເປັນປີທຳອິດທີ່ດຳເນີນການຈັດການຮຽນ-ການສອນຫຼັກສູດພາສາຈີນ ລະດັບປະລິນຍາຕີ.

7) ກາຍະພາບ ແລະ ສິ່ງອຳນວຍຄວາມສະດວກ (Physical Facilities and Evidence) ບັນດາສະຖານສຶກສາ ລວມເຖິງລະດັບມະຫາວິທະຍາໄລ ເຫັນວ່າມີຄວາມພ້ອມດ້ານອາຄານຮຽນ, ອຸປະກອນໂຕະຕັ່ງ ທີ່ມີຄວາມພ້ອມຫຼາຍ ແຕ່ຍັງຂາດ ສື່ທີ່ເປັນອີເລັກໂຕຣນິກ, ຫ້ອງປະຕິບັດການພາສາ, ຫ້ອງອ່ານ ແລະ ປື້ມຕຳລາເປັນຕົ້ນ. ສ່ວນພາບຫຼັກຄວາມໜ້າເຊື່ອຖື ແລະ ຊື່ສຽງຂອງສະຖານສຶກສາ ທີ່ມີຄວາມຕ້ອງການຮຽນສູງ ແມ່ນສະຖາບັນຂົງຈື ແຕ່ເນື່ອງຈາກມີຂໍ້ຈຳກັດດ້ານສະຖານທີ່ ແລະ ບຸກຄະລາກອນຄູ ຈຶ່ງບໍ່ສາມາດຮັບຫຼາຍ ແຕ່ປະຊາຊົນພາຍນອກບໍ່ທັນຮັບຮູ້ວ່າ ບໍ່ແມ່ນນັກສຶກສາມະຫາ ວິທະຍາໄລສຸພານຸວົງ ກໍສາມາດເຂົ້າຮຽນໄດ້.

### 3.2 ສຳຫຼວດຄວາມຕ້ອງການຮຽນພາສາຈີນຂອງນັກສຶກສາທີ່ສະຖາບຸຕິທຳແຫ່ງຊາດ ສາຂາແຂວງຫຼວງພະບາງ ເພື່ອເປັນການກຽມຄວາມພ້ອມໃນການບໍລິການດ້ານກົດໝາຍ ເພື່ອຮອງຮັບການເປີດເສັ້ນທາງ ລົດໄຟລາວ-ຈີນ

ຜົນການສຳຫຼວດຄວາມຕ້ອງການຮຽນພາສາຈີນຂອງນັກສຶກສາທີ່ສະຖາບັນຍຸຕິທຳແຫ່ງຊາດສາຂາແຂວງຫຼວງພະບາງດັ່ງນີ້:

ຜົນການສຳຫຼວດຈາກກຸ່ມຕົວຢ່າງ ຈາກນັກສຶກສາ ທີ່ສະຖາບັນຍຸຕິທຳແຫ່ງຊາດ ສາຂາພາກເໜືອ ຈຳນວນທັງໝົດ 242 ຄົນ, ຍິງ 86 ຄົນ. ນັກສຶກສາປີທີ 1: 55 ຄົນ, ປີ 2: 54 ຄົນ, ປີ 3: 106 ຄົນ ແລະ ປີ 4: 27 ຄົນຜູ້ຕອບແບບສອບຖາມເຄີຍຮຽນພາສາຈີນມາກ່ອນຈຳນວນ 41 ຄົນ ແລະ ບໍ່ເຄີຍຮຽນ 201 ຄົນ (83.1%).

ຜູ້ຕອບແບບສອບຖາມ ຮຽນພິເສດຈຳນວນ 21 ຄົນ ຫຼື 51.2 %, ຮຽນຈາກສະຖາບັນການສຶກສາຈຳນວນ 10 ຄົນ ເທົ່າກັບ 24.4 %, ຮຽນດ້ວຍຕົນເອງຈຳນວນ 8 ຄົນ ເປັນ 19.5% ແລະ ເຄີຍໄປຮຽນທີ່ ສປຈີນຈຳນວນ 2 ຄົນ ເທົ່າກັບ 4.9%.

ສ່ວນ ເວລາເຄີຍຮຽນພາສາຈີນ 1-3 ເດືອນຫຼາຍທີ່ສຸດ (41.5%). ຄວາມສາມາດ ໃນການຈ່າຍຄ່າຮຽນລະຫວ່າງ 310,000-350,000 ກີບຕໍ່ເດືອນ (ຄູຄົນລາວທີ່ຜ່ານການຝຶກວິຊາຊີບຄູໃໝ່) ກວມ 56.6% ແລະ ຮອງລົງມາ ແມ່ນ 300,000 ກີບ.

ລະດັບຄວາມຮັບຮູ້ດ້ານພາສາຈີນທັງ 4 ທັກສະແມ່ນຍັງຢູ່ໃນລະດັບຕ່ຳຫຼາຍ ໂດຍສະເພາະ ແມ່ນ ທັກສະດ້ານການຂຽນ ພຽງແຕ່ 1.69, ທັກສະດ້ານການອ່ານ ມີຄ່າສະເລ່ຍ 1.80, ທັກສະດ້ານເວົ້າ ມີຄ່າສະເລ່ຍໃນລະດັບ 1.98 ແລະ ທັກສະດ້ານການຟັງ ມີຄ່າສະເລ່ຍໃນລະດັບ 2.13.

ຄວາມຕ້ອງການຮຽນຮຽນພາສາຈີນ ແມ່ນຕ້ອງການຮຽນທັງ 4 ທັກສະ ເຊິ່ງມີລະດັບຄວາມສຳຄັນໃນ

ລະດັບຫຼາຍ ແມ່ນທັກສະການເວົ້າມີລະດັບຄວາມສຳຄັນ ເຖິງ 3.74 ຮອງລົງມາແມ່ນ ທັກສະການຟັງ, ທັກສະການອ່ານ ແລະ ທັກສະດ້ານການຮຽນ.

ຄວາມຕ້ອງການດ້ານເວລາມີ ຄ່າລະດັບຄວາມສຳຄັນໃນລະດັບຫຼາຍ ທັງສອງໄລຍະເວລາ ແຕ່ຕ້ອງການຮຽນຫຼັກສູດ 1 ປີຂຶ້ນໄປມີຄ່າເທົ່າກັບ 3.66 ແລະ ຕ້ອງການຮຽນ ຕ່ຳກວ່າ 1 ປີ ແມ່ນມີຄ່າລະດັບຄວາມສຳຄັນຫຼາຍ.

ຄວາມຕ້ອງການຝຶກອົບຮົມພາສາຈີນຂອງຜູ້ຕອບແບບສອບຖາມ ຄວາມຕ້ອງການທັກສະການນຳໃຊ້ພາສາຈີນ: ທັງ 4 ທັກສະມີລະດັບຄວາມສຳຄັນຫຼາຍ. ຄວາມຕ້ອງການດ້ານເວລາໃນການຮຽນພາສາຈີນ: 1 ປີຂຶ້ນໄປ, ຄວາມຕ້ອງການດ້ານສະຖານທີ່ຜູ້ຕອບແບບສອບຖາມແມ່ນຕ້ອງການ ຮຽນທີ່ສະຖາບັນຍຸຕິທຳແຫ່ງຊາດ ສາຂາແຂວງຫຼວງພະບາງ ແລະ ຮຽນຕໍ່ລະດັບສູງຂຶ້ນທີ່ ສປຈີນ, ສ່ວນຄວາມຕ້ອງການດ້ານເນື້ອໃນ ສ່ວນຫຼາຍແມ່ນຕ້ອງການຮຽນພາສາຈີນສຳລັບກົດໝາຍ ແລະ ພາສາຈີນສຳຫຼັບການສື່ສານທົ່ວໄປ.

## 4. ວິພາກຜົນ

ການວິພາກຜົນການສຶກສາສະພາບການຈັດການຮຽນ-ການສອນພາສາຈີນຂອງສະຖານສຶກສາລະດັບຕ່າງໆ ໃນເທດສະບານນະຄອນຫຼວງພະບາງ ໂດຍອີງຕາມທິດສະດີສ່ວນປະສົມທາງການຕະຫຼາດດ້ານການສຶກສາ ແນວທິດສະດີ ຂອງ Kotler ແລະ Fox (1995) ເຫັນວ່າຫຼັກສູດການຈັດການຮຽນການສອນລະດັບປະລິນຍາຕີ ມີ 1 ຫຼັກສູດ ແລະ ຫຼັກສູດໄລຍະສັ້ນມີຈຳນວນຫຼາຍ ແຕ່ຫຼັກສູດການຮຽນລະດັບປະຖົມມັດທະຍົມ ແມ່ນຍັງບໍ່ທັນເປັນລະບົບ, ຄຸນນະພາບດ້ານບຸກຄະລາກອນຍັງບໍ່ທັນພຽງພໍ ແລະ ປະສົບການດ້ານການສອນພາສາຈີນຍັງບໍ່ທັນຫຼາຍ, ສະພາບແວດລ້ອມ ແລະ ສະຖານທີ່ການຈັດການຮຽນການສອນ ຍັງບໍ່ທັນເໝາະສົມ, ການຈັດກິດຈະກຳເພື່ອສົ່ງເສີມການຕະຫຼາດຍິ່ງບໍ່ທັນໄດ້ດີ, ຂະບວນການຈັດການຮຽນການສອນຍັງບໍ່ທັນມີນະວັດຕະກຳ ແຕ່ເຫັນວ່າດ້ານລາຄາແມ່ນເໝາະສົມສຳຫຼັບນັກຮຽນພາກເໜືອທີ່ບໍ່ແພງເກີນໄປ. ສຳຫຼັບສະຖາບັນການສຶກສາພາກເອກະຊົນຍັງຂາດບຸກຄະລາກອນ (people) ທີ່ເປັນຄູພາສາຈີນ ແລະ ສຳລັບຄູທີ່ສອນພາສາຈີນ ປັດຈຸບັນຕ້ອງການຝຶກອົບຮົມທັກສະການສອນພາສາຈີນສຳລັບນັກຮຽນປະຖົມ ແລະ ມັດທະຍົມສະເພາະເປັນທັກສະທີ່ມີຄວາມຈຳເປັນສຳລັບບຸກຄະລາກອນ. ນອກຈາກນັ້ນ, ທາງຜູ້ບໍລິຫານໂຮງຮຽນທີ່ສອນພາສາຈີນຍັງບໍ່ທັນມີການຈັດການຫຼັກສູດ (Program) ທີ່ຕໍ່ເນື່ອງແຕ່ປະຖົມຫາມັດທະຍົມທີ່ສົ່ງຜົນຕໍ່ຄຸນນະພາບການຈັດການຮຽນການສອນໂດຍທາງກົງ ແລະ ທາງອ້ອມ.

ອີງຕາມຜົນການວິເຄາະຈຸດປະສົງທີ (2) ພົບວ່ານັກສຶກສາທີ່ເຄີຍຮຽນພາສາຈີນ ມີຈຳນວນ 41 ຄົນ ແລະ ບໍ່ເຄີຍຮຽນ ຜູ້ຕອບແບບສອບຖາມເຄີຍຮຽນພາສາຈີນມາກ່ອນ ແລະ ບໍ່ເຄີຍຮຽນ 201 ຄົນ, ສ່ວນຫຼາຍແມ່ນຮຽນພາຍໃນປະເທດ ເຫັນວ່າ ລະດັບຄວາມສາມາດໃນການນຳໃຊ້ພາສາຈີນ ໂດຍສະເພາະການຮຽນ ແລະ ການອ່ານແມ່ນຢູ່ໃນລະດັບຕ່ຳຫຼາຍ ຍັງບໍ່ສາມາດອ່ານ ແລະ ແຕ່ງເອກະສານເປັນພາສາຈີນ ທີ່ເປັນຄວາມຕ້ອງການດ້ານທັກສະສຳລັບອາຊີບກົດໝາຍ. ແຕ່ຜູ້ຕອບແບບສອບຖາມຈຳນວນທັງໝົດແມ່ນມີຄວາມຕ້ອງການຮຽນພາສາຈີນ. ສະນັ້ນ ທັກສະການສື່ສານດ້ານພາສາຈີນເປັນທັກສະທີ່ຈຳເປັນສຳລັບນັກສຶກສາທີ່ຈະກອບອາຊີບທີ່ພົວພັນກັບ ສປຈີນ ເພື່ອປະຕິບັດໄດ້ຕາມແຜນຍຸດທະສາດຂອງພັກ ແລະ ລັດຖະບານ ໃຫ້ການສ້າງເສັ້ນທາງລົດໄຟ ລາວຈີນ ເປັນໂຄງການທີ່ສ້າງໂອກາດໃນການສ້າງວຽກເຮັດງານທຳ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ. ສະນັ້ນ, ການນຳຂັ້ນສູງຂອງ ສອງປະເທດ ສປປ ລາວ ແລະ ສປຈີນ ຈຶ່ງຕັດສິນໃຈສູງໃນການລົງທຶນ ທີ່ເປັນໂຄງການທີ່ລົງທຶນຂະໜາດໃຫຍ່ທີ່ສຸດຂອງສອງປະເທດ ທີ່ຈຳເປັນໃນການເຊື່ອມຈອດເສັ້ນທາງການຄ້າລະຫວ່າງ ສປປ ລາວ, ພາກພື້ນ ແລະ ສາກົນ ຕາມແຜນເບື້ອງຕົ້ນໂຄງການກໍ່ສ້າງທາງລົດໄຟ ຈະເປັນໂຄງການສ້າງວຽກເຮັດງານທຳໃຫ້ກັບ ປະຊາຊົນລາວ ຈຳນວນຫຼາຍກວ່າ 7,000 (ເຈັດພັນກວ່າຄົນ) ແຕ່ຜົນການລາຍງານຕົວຈິງມີແຮງງານລາວປະມານ 2,000 ກວ່າຄົນເທົ່ານັ້ນ ສ່ວນໃຫຍ່ແມ່ນເປັນພະນັກງານຂັບລົດທີ່ສາມາດສື່ສານພາສາຈີນເບື້ອງຕົ້ນເທົ່ານັ້ນ (Chuen, 2019).

## 5. ສະຫຼຸບຜົນ

ຫຼັກສູດການສອນພາສາຈີນລະດັບຂັ້ນປະຖົມຄວນເພີ່ມ ຈຳນວນຊົ່ວໂມງຂຶ້ນຕື່ມ, ການພັດທະນາທັກສະການສອນພາສາຈີນໃຫ້ກັບຄູ, ພັດທະນາສື່ການສອນ, ພັດທະນາກິດຈະກຳການສອນ ແລະ ຂະບວນການສອນທີ່ເປັນການສ້າງແຮງຈູງໃຈແກ່ຜູ້ຮຽນ.

ພາສາຈີນສຳລັບກົດໝາຍເປັນຄວາມຕ້ອງລະດັບຫຼາຍ ຈຶ່ງສະເໜີໃຫ້ພິຈາລະນາພັດທະນາຫຼັກສູດທີ່ເໝາະ

ສິມ ແລະ ມີວິທີການສອນທີ່ມີປະສິດທິພາບເພື່ອເປັນການເສີມທັກສະດ້ານພາສາຈີນແກ່ນັກຮຽນທີ່ຈົບວິຊາສະເພາະດ້ານກົດໝາຍໃຫ້ສາມາດໄປປະກອບອາຊີບຕາມຄວາມຕ້ອງການຂອງຕະຫຼາດແຮງງານ

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າ ວິທະຍາສາດຂໍຢັ້ງຢືນວ່າຂໍ້ມູນທັງໝົດ ທີ່ມີໃນບົດຄວາມວິຊາການສະບັບນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ພວກຂ້າພະເຈົ້າ ຂໍຮັບຜິດຊອບພຽງຝ່າຍດຽວ.

## 7. ເອກະສານອ້າງອີງ


ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ. (2019). ສະຖິຕິນັກທ່ອງທ່ຽວປະຈຳປີ.

ສະຖາບັນຍຸຕິທຳແຫ່ງຊາດ ສາຂາແຂວງຫຼວງພະບາງ. (2011). ບົດສະຫຼຸບປະຈຳປີ 2019 - 2020 ແລະ ທິດທາງແຜນການ ສົກສຶກສາ 2020 - 2021.

ແສງຈັນ ຈັນທະເສນ, ໂພຄຳ ພົມມະວົງ, ວັນນິສາ ທຳມະຈັກ ແລະ ຄະນະ. (2020). ເອກະສານປະກອບການສອນວິຊາ ການປະກອບກິດຈະການ (Entrepreneurship), ກະຊວງສຶກສາທິການ ແລະ ກິລາ ສປປລາວ. ນະຄອນຫຼວງວຽງຈັນ.

World Travel and Tourism Council (WTTC). (2018). Economic Impacts on Lao Tourism.

Kotler & Fox (1995), Strategic Management for Educational Institution, 2nd ed, Prentice Hall. Maslow, A. H. (1943). A theory of human motivation. Psychological Review, 50(4), 370-396. https://doi.org/10.1037/h0054346

Ivy, J& Fattal E.A. (2010), Marketing private EFL Programs in Damascus, TESOL Journal, Vol. 2, P.130-143.

Gibbs,P & Knapp,M. (2002). Marketing Further and Higher Education Research: An Educators Guide to Promoting Courses, Depatments and Institutions, London, Kogan.

Chuen, S. (2019). Gallery: The China-built railway cutting through Laos - China Dialogue.

Riemer, H. A. (2007). Multidimensional Model of Coach Leadership. In S. Jowette & D. Lavallee (Eds.), Social Psychology in Sport (p. 57–73)